ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການເລືອກຕັ້ງລະດັບຊາດ
ຄະນະປະຈຳ

ເລກທີ 34 /ຄປລຊ
ນະຄອນຫລວງວຽງຈັນ, ວັນທີ 15 ກຸມພາ 2011

ຄຳແນະນຳ
ຂອງຄະນະກຳມະການເລືອກຕັ້ງລະດັບຊາດ ກ່ຽວກັບການຕີຄວາມໝາຍບາງມາດຕາຂອງກົດໝາຍວ່າດ້ວຍ ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ສຳລັບຜູ້ມີສິດເລືອກຕັ້ງ ແລະຜູ້ສະໝັກຮັບເລືອກຕັ້ງ

ເພື່ອຮັບປະກັນໃຫ້ມີຄວາມເຂົ້າໃຈຢ່າງຖືກຕ້ອງ ແລະ ເປັນເອກະພາບ ໃນການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍ ການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສະບັບປັບປຸງ ປີ 2010) ນັ້ນ ຄະນະກຳມະການເລືອກຕັ້ງລະດັບຊາດ ຈຶ່ງໄດ້ອອກຄຳແນະນຳ ກ່ຽວກັບການຕີຄວາມໝາຍບາງມາດຕາຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ສຳລັບຜູ້ມີສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ດັ່ງນີ້:

I. ຜູ້ມີສິດເລືອກຕັ້ງ ແລະຜູ້ສະໝັກຮັບເລືອກຕັ້ງ

ພົນລະເມືອງລາວທຸກຄົນ ໂດຍບໍ່ຈຳແນກເພດ, ເຜົ່າ, ຄວາມເຊື່ອຖື, ຖານະໃນສັງຄົມ, ທີ່ຕັ້ງພູມລຳເນົາ, ວິຊາຊີບ ລ້ວນແຕ່ມີສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ.

ສຳລັບຜູ້ມີສິດເລືອກຕັ້ງ ຕ້ອງມີອາຍຸ ແຕ່ສິບແປດປີ ຂຶ້ນໄປ.

ສຳລັບຜູ້ສະໝັກຮັບເລືອກຕັ້ງ ຕ້ອງມີອາຍຸແຕ່ ຊາວເອັດປີ ຂຶ້ນໄປ ແລະ ມີມາດຕະຖານຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງກົດໝາຍວ່າດ້ວຍ ການເລືອກຕັ້ງສະມາຊິກສະພາແຫ່ງຊາດ.

ການຄິດໄລ່ອາຍຸຂອງຜູ້ມີສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ໃຫ້ຄົບ 18 ປີ ຫລື 21 ປີ ນັ້ນ ແມ່ນໃຫ້ໄລ່ເອົາເດືອນເກີດ (ໝາຍຄວາມວ່າ ເດືອນ 4 ປີ 2011 ຜູ້ມີສິດເລືອກຕັ້ງຕ້ອງໃຫ້ມີອາຍຸຄົບ 18 ປີ ແລະ 21 ປີ).

II. ຜູ້ບໍ່ມີສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ

ພົນລະເມືອງລາວທີ່ບໍ່ມີສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ມີດັ່ງນີ້:

1. ຜູ້ເປັນບ້າ, ເສຍຈິດ;

2. ຜູ້ຖືກສານຕັດສິນລົງໂທດຕັດອິດສະລະພາບ ຫລື ຖືກປິດສິດເລືອກຕັ້ງ ແລະ ສິດສະໝັກຮັບເລືອກຕັ້ງ;
3. ຜູ້ບໍ່ຮອດກະສຽນອາຍຸ 18 ປີ ສຳລັບຜູ້ມີສິດເລືອກຕັ້ງ ແລະ 21 ປີ ສຳລັບຜູ້ສະໝັກຮັບເລືອກຕັ້ງ;
4. ຜູ້ໄດ້ຮັບການພາກໂທດ ຕາມຄຳຕັດສິນຂອງສານ ຊຶ່ງຍັງຢູ່ໃນໄລຍະການປະຕິບັດໂທດ 5 ປີ;
5. ຜູ້ຖືກສານຕັດສິນລົງໂທດຕັດອິດສະລະພາບ ໃນສະຖານຄະຣຸໂທດ (ໂທດສະຖານໜັກ) ຫລື ການກະທຳຜິດທີ່ພົວພັນກັບການເລືອກຕັ້ງ ຊຶ່ງສານໄດ້ລົງໂທດເພີ່ມ ດ້ວຍການປິດສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ແຕ່ການປິດສິດດັ່ງກ່າວ ແມ່ນຍັງຢູ່ໃນໄລຍະການປະຕິບັດໂທດເພີ່ມ 5 ປີ ນັບແຕ່ວັນສິ້ນສຸດການປະຕິບັດໂທດ ຕົ້ນຕໍ;
6. ຜູ້ໄດ້ແຕ່ງດອງແລ້ວ ແຕ່ມີອາຍຸບໍ່ທັນຮອດ 18 ປີ;
7. ພະສົງ, ສຳມະເນນ, ພໍ່ຂາວ, ແມ່ຂາວ, ນັກບວດ.

III. ຜູ້ຫູໜວກ ແລະ ຕາບອດ, ຜູ້ຫູໜວກ ແລະ ປາກກືກ, ຜູ້ຕາບອດ ແມ່ນມອບໃຫ້ຄະນະກຳມະການເລືອກຕັ້ງຂັ້ນທ້ອງຖິ່ນສ້າງເງື່ອນໄຂສະດວກ ເພື່ອໃຫ້ບຸກຄົນດັ່ງກ່າວ ໄດ້ໃຊ້ສິດປ່ອນບັດເລືອກຕັ້ງ ເວັ້ນເສຍແຕ່ບຸກຄົນ ເຫລົ່ານີ້ຫາກໄດ້ສະລະສິດ.

IV. ຜູ້ຖືກຫາ ທີ່ຢູ່ໃນຄ້າຍຄຸມຂັງ, ສະຖານທີ່ກັກຂັງ ຫລື ພວມຖືກດຳເນີນຄະດີ ຊຶ່ງສານປະຊາຊົນ ຍັງບໍ່ທັນໄດ້ຕັດສິນເທື່ອ ແມ່ນມອບໃຫ້ກະຊວງປ້ອງກັນຄວາມສະຫງົບຊົ້ນຳ ເພື່ອເອື້ອອຳນວຍຄວາມສະດວກ ໃຫ້ຜູ້ຖືກຫານັ້ນໄດ້ໃຊ້ສິດປ່ອນບັດເລືອກຕັ້ງ ຕາມຄວາມເໝາະສົມ.

V. ພົນລະເມືອງລາວ ລວມທັງນັກການທູດ, ນັກສຶກສາລາວ ທີ່ພວມປະຕິບັດໜ້າທີ່, ຄົ້ນຄວ້າ, ສຶກສາ ແລະ ດຳລົງຊີວິດ ຢູ່ ຕ່າງປະເທດນັ້ນ, ໃຫ້ກະຊວງຕ່າງປະເທດ ຊົ້ນຳສະຖານທູດລາວ ປະຈຳ ສສ ຫວຽດນາມ, ຣາຊະອານາຈັກໄທ ຂຶ້ນບັນຊີລາຍຊື່ ຜູ້ມີສິດເລືອກຕັ້ງ ທີ່ພວມເຮັດວຽກ, ສຶກສາ ຄົ້ນຄວ້າຮ່ຳຮຽນ ແລະ ດຳລົງຊີວິດ ໃນນະຄອນຫລວງຂອງປະເທດດັ່ງກ່າວເທົ່ານັ້ນ ເພື່ອຈັດຕັ້ງໜ່ວຍປ່ອນບັດເລືອກຕັ້ງຂອງຕົນຂຶ້ນ ຕາມທີ່ໄດ້ກຳນົດໄວ້ ຢູ່ໃນກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ສະບັບປັບປຸງ , ເປັນຕົ້ນແມ່ນ ມາດຕາ 19, 29, 30 ເພື່ອໃຫ້ບຸກຄົນດັ່ງກ່າວ ໄດ້ໃຊ້ສິດປ່ອນບັດເລືອກຕັ້ງເອົາສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1 ນະຄອນຫລວງວຽງຈັນ ຫລືເຂດເລືອກຕັ້ງໃດໜຶ່ງກໍ່ໄດ້ຕາມຄວາມເໝາະສົມ.

ດັ່ງນັ້ນ ຈຶ່ງໄດ້ແຈ້ງມາຍັງຄະນະກຳມະການເລືອກຕັ້ງທຸກຂັ້ນ ແລະ ຂະແໜງການທີ່ກ່ຽວຂ້ອງ ຈົ່ງໄດ້ປະຕິບັດຕາມຄຳແນະນຳສະບັບນີ້.

ຄະນະກຳມະການເລືອກຕັ້ງລະດັບຊາດ

ຜູ້ປະຈຳການ

ບານີ ຢາທໍ່ຕູ້